ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ:0896/ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ:11 ພຶດສະພາ 2015

ຄໍາສັ່ງ

ຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າ

ກ່ຽວກັບການຄວບຄຸມລາຄາຜະລິດຕະພັນຢາສູບ ດ້ວຍການກໍານົດລາຄາຂາຍຍ່ອຍຕໍ່າສຸດ.

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມດໍາລັດເລກທີ 522/ນຍ, ລົງວັນທີ 23/12/2011, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ.
- ອີງຕາມດໍາລັດເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມແຈ້ງການຂອງຫ້ອງວ່າການລັດຖະບານເລກທີ 346/ຫລບ.ກສສ, ລົງວັນທີ 26/02/2015 ກ່ຽວກັບການຄວບຄຸມລາຄາຢາສູບດ້ວຍມາດຕະການກໍານົດລາຄາຂາຍຍ່ອຍຕໍ່າສຸດ.

ເພື່ອເປັນການປົກປ້ອງສຸຂະພາບຂອງພົນລະເມືອງທີ່ໄດ້ຮັບຜົນກະທົບຈາກການຊົມໃຊ້ຜະລິດຕະພັນຢາສູບ ແລະ ການໄດ້ຮັບຄວັນຢາສູບ, ແນໃສ່ຫຼຸດຜ່ອນການເຂົ້າເຖິງຢາສູບຂອງຊາວໜຸ່ມເຍົາວະຊົນ, ຫຼຸດຜ່ອນການຄ້າຂາຍຢາສູບນອກລະບົບ, ຮັກສາສະເຖຍລະພາບທາງດ້ານລາຄາ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ດໍາເນີນທຸລະກິດທີ່ຖືກຕ້ອງ, ຜູ້ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ.

ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ອອກຄໍາສັ່ງ :

1. ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເຜີຍແຜ່ ແລະ ແນະນຳຄຳສັ່ງສະບັບນີ້ໃຫ້ບັນດາໂຮງງານຜະລິດຢາສູບ, ຕະຫຼາດ ແລະ ຫ້າງຮ້ານທັງຫຼາຍ ພາຍໃນຂອບເຂດເມືອງຂອງຕົນດັ່ງນີ້:

- ໃຫ້ຄຸ້ມຄອງລາຄາຂາຍຍ່ອຍຜະລິດຕະພັນຢາສູບທຸກຍີ່ຫໍ້, ຊຶ່ງນຳເຂົ້າຈາກຕ່າງປະເທດ ແລະ ຜະລິດຢູ່ພາຍໃນທີ່ວາງຂາຍຢູ່ຫ້ອງຕະຫຼາດ ແລະ ຫ້າງຮ້ານຕ່າງໆ ໂດຍແນະນຳໃຫ້ເຂົາເຈົ້າຂາຍໃນລາຄາຕ່ຳສຸດບໍ່ໃຫ້ຫຼຸດ ສາມພັນກີບ (3.000 ກີບ) ຕໍ່ຊອງ.
- ຢາສູບທີ່ວາງຂາຍພາຍໃນຕະຫຼາດ ແລະ ຫ້າງຮ້ານຕ່າງໆ ຕ້ອງຕິດສະແຕມອາກອນໃສ່ແຕ່ລະຊອງ ແລະ ແຕ່ລະຕຸດ.
- ຢາສູບຕ້ອງຮັບປະກັນຄຸນນະພາບ, ບໍ່ເຊື່ອມຄຸນ, ເສຍຄຸນ ຫຼື ໝົດອາຍຸ,
- ສຳລັບຢາສູບທີ່ນຳເຂົ້າຈາກຕ່າງປະເທດ ຕ້ອງມີເອກະສານຢັ້ງຢືນການນຳເຂົ້າຢ່າງຖືກຕ້ອງ.

ການເຜີຍແຜ່ ແລະ ແນະນຳ ໃຫ້ບັນດາໂຮງງານຜະລິດຢາສູບ, ຕະຫຼາດ ແລະ ຫ້າງຮ້ານທັງຫຼາຍພາຍໃນຂອບເຂດເມືອງຂອງຕົນກ່ຽວກັບເນື້ອໃນຄຳສັ່ງສະບັບນີ້ໃຫ້ເຮັດສຳເລັດພາຍໃນ 30 ວັນ ນັບແຕ່ຄຳສັ່ງສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

2. ພາຍຫຼັງທີ່ເຜີຍແຜ່ ແລະ ແນະນຳແລ້ວ ໃຫ້ກົມການຄ້າພາຍໃນ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແຕ່ງຕັ້ງໃຫ້ເຈົ້າໜ້າທີ່ກວດກາການຄ້າລົງຕິດຕາມກວດກາຢູ່ຕະຫຼາດ ແລະ ຫ້າງຮ້ານຕ່າງໆ ຖ້າພົບເຫັນການລະເມີດໃດໜຶ່ງ ດັ່ງທີ່ລະບຸໄວ້ໃນຂໍ້ 1 ຂອງຄຳສັ່ງສະບັບນີ້ ໃຫ້ດຳເນີນມາດຕະການຕໍ່ຜູ່ລະເມີດຕາມທີ່ກຳນົດໄວ້ໃນຂໍ້ 3ຂອງຄຳສັ່ງສະບັບນີ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ສະບັບເລກທີ 474/ນຍ, ລົງວັນທີ 18/11/2010 ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

3.ການປະຕິບັດມາດຕະການຕໍ່ຜູ່ທີ່ລະເມີດ ໃຫ້ປະຕິບັດດັ່ງນີ້:

1.) ລະເມີດຄັ້ງທີໜຶ່ງໃຫ້ຕັກເຕືອນແລະເຮັດບົດບັນທຶກເຊັນຮັບຮູ້ການລະເມີດ;

2.) ຖ້າມີການລະເມີດຄັ້ງທີສອງໃຫ້ດຳເນີນການປັບໃໝແຕ່ຫ້າແສນກີບຫາໜຶ່ງລ້ານກີບ (500.000 ກີບ-1.000.000 ກີບ);

3.) ຖ້າມີການລະເມີດຄັ້ງທີສາມໃຫ້ດຳເນີນການປັບໃໝແຕ່ໜຶ່ງລ້ານກີບຫາສອງລ້ານກີບ (1.000.000ກີບ-2.000.000 ກີບ)ແລະອາຍັດຜະລິດຕະພັນຢາສູບທີ່ບໍ່ຖືກຕ້ອງທັງໝົດ.

4.ການປະຕິບັດມາດຕະການຕໍ່ຜູ່ລະເມີດ ແມ່ນໃຫ້ເລີ່ມປະຕິບັດ ພາຍຫຼັງ 45 ວັນ ນັບແຕ່ຄຳສັ່ງສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

5. ໃຫ້ທຸກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ລາຍງານຜົນການຈັດຕັ້ງປະຕິບັດທຸກໆ 03 ເດືອນ, ຖ້າຫາກພົບຂໍ້ຫຍຸ້ງຍາກ ໃນເວລາຈັດຕັ້ງປະຕິບັດ ໃຫ້ລາຍງານດ່ວນຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເພື່ອຄົ້ນຄ້ວາ ແລະ ໃຫ້ທິດຊີ້ນຳວິທີການແກ້ໄຂ.

6. ມອບໃຫ້ ກົມການຄ້າພາຍໃນ ຕິດຕາມ ແລະ ໃຫ້ຄຳແນະນຳ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງມີປະສິດທິຜົນສູງ;

7. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

8. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ນ. ເຂັມມະນີ ພົນເສນາ

<u>ສຳເນົາສົ່ງ</u>:

1. ຫ້ອງວ່າການລັດຖະບານ "ຕາງລາຍງານ"
2. ຄະນະນຳກະຊວງ 04 ທ່ານ "ເພື່ອຊາບ"
3. ບັນດາກົມ, ຫ້ອງການ, ສະຖາບັນ ອ້ອມຂ້າງກະຊວງ "ເພື່ອຊາບ ແລະ ຕິດຕາມ"
4. ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ "ເພື່ອຊີ້ນຳການຈັດຕັ້ງປະຕິບັດຂອງພາກທຸລະກິດ"
5. ກະຊວງການເງິນ "ເພື່ອລາຍງານ"
6. ກະຊວງສາທາລະນະສຸກ "ເພື່ອລາຍງານ"